ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ ...739.../ຫກ

ນະຄອນຫຼວງວຽງຈັນ,ວັນທີ...19.ຕຸລາ.2023

## ໜັງສືແຈ້ງເຊີນປະມູນ
## ໂຄງການສ້ອມແປງອາຄານສະແດງຟ້ອນນາງແກ້ວ(ຫໍພິພິທະພັນ ແຂວງຫຼວງພະບາງ)

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 857/ຖວທ, ລົງວັນທີ 26 ກັນຍາ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການສ້ອມແປງອາຄານສະແດງຟ້ອນນາງແກ້ວ(ຫໍພິພິທະພັນ ແຂວງຫຼວງພະບາງ) ສະບັບເລກທີ 932/ຖວທ, ລົງວັນທີ 05 ຕຸລາ 2023;
- ອີງຕາມ ແຈ້ງການ ການຈັດຕັ້ງຜັນຂະຫຍາຍ ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການນຳໃຊ້ທຶນຮ່ອງເງິນເກີນແຜນປີ 2022 ສະບັບເລກທີ 1479/ຫສນຍ, ລົງວັນທີ 15 ສິງຫາ 2023.

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານບ້ວງລາຍຈ່າຍເງິນ ບຳເນັດເກັບລາຍຮັບເກີນແຜນປີ 2022 ໂຄງການສ້ອມແປງອາຄານສະແດງຟ້ອນນາງແກ້ວ(ຫໍພິພິທະພັນ ແຂວງຫຼວງພະບາງ). ສຳລັບໄລຍະເວລາຂອງການສ້ອມແປງທັງໝົດແມ່ນບໍ່ໃຫ້ກາຍ 04 ເດືອນ ນັບຕັ້ງແຕ່ມື້ລົງມືຈັດຕັ້ງປະຕິບັດຈົນເຖິງມື້ມອບ - ຮັບໂຄງການ;
2. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນການສ້ອມແປງອາຄານສະແດງຟ້ອນນາງແກ້ວ(ຫໍພິພິທະພັນ ແຂວງຫຼວງພະບາງ);
3. ໃນການປະມູນແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ(ສຳເນົາດ້ານຫຼັງມາພ້ອມ) ແລະ ມີໃບອະນຸຍາດດຳເນີນທຸລະກິດທາງດ້ານການກໍ່ສ້າງ, ສ້ອມແປງເຄຫາສະຖານປະຈຳປີ 2023 ໃນຂອບເຂດທົ່ວປະເທດ;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາບັນຊີແບບຄົບຊຸດປະຈຳປີ 2022 ອອກໂດຍກົມສ່ວຍສາອາກອນ 2023 (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນຜ່ານມາວົງເງິນບໍ່ຫຼຸດ 1.000.000.000 ກີບ ຂຽນເປັນໂຕໜັງສື (ໜຶ່ງຕື້ກີບ) ແລະ ບັນຊີສຳຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;

6. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ນຳຄະນະຮັບຜິດຊອບໂຄງການຢູ່ທີ່ ພະແນກແຜນການ ແລະ ການລົງທຶນ, ກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສອບຖາມຂໍ້ມູນໂທ: 021 212898; 020 2223 9394 ນາງ ຄຳບາງ ສຸລິມາບຸນເລີດ. ການຂາຍຊອງປະມູນເລີ່ມແຕ່ ວັນທີ 19 ຕຸລາ 2023 (ຕາມໂມງລັດຖະການ) ໃນລາຄາ 1.500.000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄ້ຳປະກັນການປະມູນດ້ວຍ ເງິນສົດ, ແຊັກ(ວິຊ້າ) ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງຂອງວັນທີ 09 ພະຈິກ 2023 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 14:00 ໂມງຂອງວັນທີ 09 ພະຈິກ 2023 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

**ຫົວໜ້າຫ້ອງການ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຫ້ອງການ

ບົວໄລ ພານຸວົງ